ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ການກວດສອບທະນາຄານທຸລະກິດໂດຍບໍລິສັດກວດສອບ

ທ່ານຜູ້ອ່ານທີ່ຮັກແພງ!!! ການກວດສອບ ແມ່ນຂະບວນການເຄື່ອນໄຫວໜຶ່ງທີ່ມີຄວາມສຳຄັນທີ່ສຸດໃນການຈັດຕັ້ງປະຕິບັດຕໍ່ກັບອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນ ໂດຍຂະບວນການດັ່ງກ່າວນັ້ນ ແມ່ນເປັນການເຄື່ອນໄຫວເກັບກຳຂໍ້ມູນ ແລະ ຫຼັກຖານຕົວຈິງຕ່າງໆກ່ຽວກັບເປົ້າໝາຍທີ່ຖືກກວດສອບຊຶ່ງດຳເນີນໂດຍອົງການ ຫຼື ພາກສ່ວນທີ່ມີສິດອຳນາດເພື່ອແນໃສ່ຢັ້ງຢືນຄວາມຖືກຕ້ອງຂອງເອກະສານລາຍງານທາງການເງິນ, ຄວາມສອດຄ່ອງທາງດ້ານກົດໝາຍ, ປະສິດທິຜົນໃນການບໍລິຫານງານ ແລະ ການນຳໃຊ້ທຶນຮອນ. ດ້ວຍເຫດນັ້ນອົງຈັດຕັ້ງພາກລັດ ແລະ ເອກະຊົນ, ຫົວໜ່ວຍທຸລະກິດ ແລະ ຫົວໜ່ວຍອື່ນໆ ຕ້ອງໄດ້ດຳເນີນການກວດສອບຢ່າງເປັນປະຈຳ.ໃນຂະແໜງການທະນາຄານກໍເຊັ່ນດຽວກັນ ການກວດສອບເປັນວຽກງານທີ່ຈຳເປັນ ແລະ ຄຽງຄູ່ກັບການດຳເນີນທຸລະກິດທີ່ທະນາຄານທຸລະກິດ ຫຼື ສະຖາບັນການເງິນ ຕ້ອງໄດ້ດຳເນີນການກວດສອບຢ່າງເປັນປະຈຳເຊັ່ນກັນ. ສະນັ້ນໃນຄັ້ງນີ້ຜູ້ຂຽນຈະມານຳສະເໜີກ່ຽວກັບການກວດສອບທະນາຄານທຸລະກິດໂດຍບໍລິສັດກວດສອບໃຫ້ໄດ້ຮັບຊາບ.

ໂດຍອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ມາດຕາ 69 ການກວດສອບໂດຍ ບໍລິສັດກວດສອບ ໄດ້ກຳນົດວ່າ: ແຕ່ລະປີ ທະນາຄານທຸລະກິດ ຕ້ອງໄດ້ຮັບການກວດສອບ ໂດຍບໍລິສັດກວດສອບ ເພື່ອ:

1. ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງການຖືບັນຊີ ຕາມລະບົບບັນຊີທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;
2. ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງການລາຍງານການເງິນປະຈຳປີ;
3. ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງການຄວບຄຸມພາຍໃນ ພ້ອມທັງໃຫ້ຄຳແນະນຳກ່ຽວກັບມາດຕະການແກ້ໄຂ;
4. ຢັ້ງຢືນການແກ້ໄຂຂອງທະນາຄານທຸລະກິດ ຕໍ່ການລະເມີດທີ່ທະນາຄານແຫ່ງ ສປປ ລາວ ໄດ້ກວດເຫັນ ແລະ ໄດ້ແຈ້ງໃຫ້ບໍລິສັດກວດສອບ;
5. ລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການຂອງທະນາຄານແຫ່ງ ສປປ ລາວ ຫຼື ການກະທຳໃດໜຶ່ງທີ່ອາດຈະມີຜົນຕໍ່ຄວາມໝັ້ນຄົງຂອງທະນາຄານທຸລະກິດ.

ໃນການປະຕິບັດການກວດສອບດັ່ງກ່າວນັ້ນ ທະນາຄານທຸລະກິດຕ້ອງວ່າຈ້າງບໍລິສັດກວດສອບເພື່ອເຂົ້າມາກວດສອບທະນາຄານຂອງຕົນຕາມການຮັບຮອງຂອງທະນາຄານແຫ່ງ ສປປ ລາວ ບົນພື້ນຖານການປະຕິບັດຕາມແຈ້ງການ ສະບັບເລກທີ 197/ທຫລ, ລົງວັນທີ 23 ພຶດສະພາ 2019 ແລະ ສະບັບເລກທີ 338/ທຫລ, ລົງວັນທີ 13 ກັນຍາ 2012 ໄດ້ກຳນົດໃຫ້ທະນາຄານທຸລະກິດ ສາມາດເລືອກໃຊ້ບໍລິສັດກວດສອບພາຍນອກໄດ້ໂດຍມີອາຍຸການ ຫ້າປີການບັນຊີ ແລະ ສາມາດວ່າຈ້າງຕໍ່ໄດ້ອີກວາລະໜຶ່ງແຕ່ບົນເງື່ອນໄຂຕ້ອງໃຫ້ມີການສັບປ່ຽນນັກກວດສອບ. ສຳລັບສາຂາທະນາຄານທຸລະກິດຕ່າງປະເທດ ແມ່ນສາມາດເລືອກໃຊ້ບໍລິສັດກວດສອບພາຍນອກດຽວກັນກັບສຳນັກງານໃຫຍ່ໄດ້ ແລະ ຕ້ອງໃຫ້ສອດຄ່ອງກັບກົດໝາຍລະບຽບການ. ສ່ວນທະນາຄານທຸລະກິດທີ່ໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບແລ້ວ ແມ່ນໃຫ້ປະຕິບັດຕາມລະບຽບຂອງຕະຫຼາດຫຼັກຊັບ. ທະນາຄານແຫ່ງ ສປປ ລາວ ຈະເປັນຜູ້ກຳນົດລາຍຊື່ບໍລິສັດກວດສອບ ໂດຍກຳນົດເງື່ອນໄຂຂອງບໍລິສັດກວດສອບທີ່ຈະບັນຈຸເຂົ້າໃນບັນຊີລາຍຊື່ ເພື່ອຮັບປະກັນຄຸນນະພາບ, ຈັນຍາບັນ ແລະ ຄວາມເປັນເອກະລາດຂອງບໍລິສັດກວດສອບໂດຍທະນາຄານທຸລະກິດສາມາດເລືອກວ່າຈ້າງບໍລິສັດກວດສອບຕາມບັນຊີລາຍຊື່ທີ່ທະນາຄານແຫ່ງ ສປປ ລາວ ກຳນົດໄວ້ ແລະ ຕ້ອງສຳເລັດການກວດສອບຊ້າສຸດບໍ່ໃຫ້ກາຍເດືອນ 03 ຂອງປີການບັນຊີຖັດໄປ ພ້ອມສົ່ງຜົນຂອງບົດລາຍງານທີ່ໄດ້ເຊັນຮັບຮອງແລ້ວໃຫ້ ທະນາຄານແຫ່ງ ສປປ ລາວ (ກົມຄຸ້ມຄອງທະນາຄານທຸລະກິດ) ບໍ່ໃຫ້ເກີນ 10 ວັນລັດຖະການ ແລະ ທະນາຄານທຸລະກິດ ລວມທັງສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງເຜີຍແຜ່ຜົນການກວດສອບ ຫຼື ຖານະການເງິນປະຈຳປີຂອງຕົນຊ້າສຸດບໍ່ໃຫ້ກາຍເດືອນ 04 ພາຍຫຼັງສິ້ນສຸດປີການບັນຊີ ໂດຍສາມາດເຜີຍແຜ່ໃນຮູບແບບ: ຜ່ານເວັບໄຊ (Website) ຂອງທະນາຄານ, ຈັດພິມເປັນປຶ້ມ, ແຜ່ນພັບ (Brochure) ຫຼື ດ້ວຍຮູບແບບອື່ນຕາມຄວາມຕ້ອງການຂອງທະນາຄານ. ຊຶ່ງໃນເວລາດຳເນີນການກວດ

ສອບຢູ່ນັ້ນຫາກທະນາຄານທຸລະກິດພົບເຫັນວ່າບໍລິສັດກວດສອບມີການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງທະນາຄານແຫ່ງ ສປປ ລາວ ມີສິດສັ່ງໃຫ້ທະນາຄານທຸລະກິດ ໂຈະ ຫຼື ຍົກເລີກ ການວ່າຈ້າງບໍລິສັດກວດສອບດັ່ງກ່າວໄດ້. ໂດຍບໍລິສັດກວດສອບນອກຈາກມີໜ້າທີ່ໃນການດຳເນີນການກວດສອບທະນາຄານທຸລະກິດຕາມສັນຍາແລ້ວ ຍັງມີພັນທະໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນຕ່າງໆ ໃຫ້ທະນາຄານແຫ່ງ ສປປ ລາວ ຕາມກົດໝາຍ ແລະ ລະບຽບການ ຫຼື ຕາມການຮຽກຮ້ອງຕ້ອງການຂອງທະນາຄານແຫ່ງ ສປປລາວ.

ນັ້ນແມ່ນການກວດສອບທະນາຄານທຸລະກິດ ໂດຍບໍລິສັດກວດສອບຊຶ່ງເປັນຂະບວນການທີ່ສຳຄັນ ທີ່ບັນດາທະນາຄານທຸລະກິດຕ້ອງໄດ້ຈັດຕັ້ງປະຕິບັດ ເພື່ອຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນໃນດ້ານຕ່າງໆບໍ່ວ່າຈະເປັນ ການຖືບັນຊີ, ຖານະທາງການເງິນ, ລະບົບການບໍລິຫານ ແລະ ການຄວບຄຸມພາຍໃນຂອງທະນາຄານ ອີກທັງເປັນການສ້າງຄວາມເຊື່ອໝັ້ນໃຫ້ແກ່ລູກຄ້າທີ່ຈະເຂົ້າມາໃຊ້ບໍລິການ ແລະ ຜູ້ທີ່ຈະເຂົ້າມາລົງທຶນນຳທະນາຄານ, ໃນດ້ານຜູ້ຄຸ້ມຄອງເອງກໍຄືທະນາຄານແຫ່ງ ສປປ ລາວ ກໍຖືເອົາການກວດສອບດັ່ງກ່າວ ເປັນຕົວຊ່ວຍໜຶ່ງທີ່ສຳຄັນ ໃນການຢັ້ງຢືນ, ຕິດຕາມກວດກາທະນາຄານທຸລະກິດ ໃນການເຄື່ອນໄຫວ, ດຳເນີນງານຢ່າງຖືກຕ້ອງຕາມລະບຽບກົດໝາຍ ແລະ ໂປ່ງໃສ.

**# ບົດຄວາມໂດຍ: ນ. ຄຳເບົ້າ ສຸວໍລະວົງ, ກົມນິຕິກຳ ທະນາຄານແຫ່ງ ສປປ ລາວ.**

**ເງິນກີບຄືກຽດສັກສີຂອງຊາດ ໃຊ້ຈ່າຍສະຫຼາດ ຊາດພັດທະນາ**